ພະແນກ ໃບ ...
ວັນ 29/6/04

...ທິປະໄຕ ປະຊາຊົນລາວ

...ຕ ເອກະພາບ ວັດທະນາຖາວອນ

ສຳນັກງານນາຍົກລັດຖະມົນຕີ ... ປ່າໄມ້

ເລກທີ....89...../ນຍ

ຮັບ ເລກທີ 1852

ນະຄອນຫລວງວຽງຈັນ, ວັນທີ...23..06..2004

ວັນທີ 29/6/004

ກະຊວງ ກະສິກຳ-ປ່າໄມ້

ເລກທີ 2616

ວັນທີ 24.6.04

ເວລາ......

# ດຳລັດ

## ວ່າດ້ວຍການແບ່ງພາລະບົດບາດ ແລະ ໜ້າທີ່ກ່ຽວກັບວຽກງານຊາຍແດນ

- ອີງຕາມກົດໝາຍວ່າດ້ວຍ ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
- ອີງຕາມຜົນກອງປະຊຸມປັບປຸງ ຊັບຊ້ອນວຽກງານຊາຍແດນແຫ່ງຊາດ ຄັ້ງວັນທີ 26 ເມສາ 2004 ແລະ ເອກະສານສະເໜີຂອງລັດຖະມົນຕີວ່າການກະຊວງການຕ່າງປະເທດ ສະບັບເລກທີ 2858/ຕປທ.ສຍກ3 ລົງວັນທີ 14 ພຶດສະພາ 2004;

## ນາຍົກລັດຖະມົນຕີອອກດຳລັດ

<u>ມາດຕາ 1</u> ແບ່ງພາລະບົດບາດ ແລະ ໜ້າທີ່ກ່ຽວກັບວຽກງານຊາຍແດນໃຫ້ບັນດາກະຊວງ, ອົງການ ດັ່ງລຸ່ມນີ້ :

1 <u>ກະຊວງການຕ່າງປະເທດ.</u>

1.1 ເປັນຜູ້ຮັບຜິດຊອບລວມກ່ຽວກັບວຽກງານຊາຍແດນລະຫວ່າງປະເທດ, ເປັນໃຈກາງໃນການເຈລະຈາກັບຕ່າງປະເທດ ແລະ ປະສານງານກັບພາກສ່ວນກ່ຽວຂ້ອງກ່ຽວກັບການຮ່ວມມື ແລະ ຄຸ້ມຄອງຊາຍແດນແຫ່ງຊາດ, ການສຳຫລວດ ແລະ ປັກຫລັກໝາຍຊາຍແດນແຫ່ງຊາດທາງບົກ ແລະ ທາງນ້ຳ, ການສຳຫລວດ ແລະ ປັກຫລັກໝາຍເພີ້ມເຕີມ, ການຈັດຕັ້ງປະຕິບັດວຽກງານຊາຍແດນແຫ່ງຊາດ ແລະ ການແກ້ໄຂຂໍ້ຂັດແຍ່ງກ່ຽວກັບຊາຍແດນ.

1.2 ວາງແຜນການຍຸດທະສາດໄລຍະສັ້ນ ແລະ ໄລຍະຍາວກ່ຽວກັບວຽກງານຊາຍແດນແຫ່ງຊາດ.

1.3 ຊຸກຍູ້ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນໃນການຈັດຕັ້ງປະຕິບັດວຽກງານຊາຍແດນກັບປະເທດໃກ້ຄຽງ.

1.4 ຮ່າງສົນທິສັນຍາ, ສັນຍາ, ອານຸສັນຍາ, ບົດບັນທຶກ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງກັບວຽກງານຊາຍແດນແຫ່ງຊາດ.

1.5 ຄຸ້ມຄອງບັນດາເອກະສານ ແລະ ແຜນທີ່ທີ່ກ່ຽວຂ້ອງກັບວຽກງານຊາຍແດນແຫ່ງຊາດ

1.6 ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຂຶ້ນແຜນກໍ່ສ້າງ ແລະ ຍົກລະດັບພະນັກງານຊາຍແດນ.

1.7 ຈັດຕັ້ງການໂຄສະນາເຜີຍແຜ່ກົດໝາຍ ແລະ ລະບຽບການຊາຍແດນໃຫ້ແກ່ບັນດາຂະແໜງການ ແລະ ທ້ອງຖິ່ນຊາບເພື່ອກໍາແໜ້ນ ແລະ ປະຕິບັດໃຫ້ຖືກຕ້ອງ.

1.8 ຂຶ້ນແຜນ, ຈັດສັນ ແລະ ຄຸ້ມຄອງງົບປະມານຮັບໃຊ້ວຽກງານຊາຍແດນແຫ່ງຊາດ.

1.9 ເປັນຜູ້ປະສານງານກັບບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນເພື່ອແກ້ໄຂບັນຫາຊາຍແດນແຫ່ງຊາດ.

1.10 ສະເໜີລັດຖະບານແຕ່ງຕັ້ງຄະນະກໍາມະການ ຫລື ອົງກອນໃດໜຶ່ງເພື່ອຮ່ວມກັນຈັດຕັ້ງປະຕິບັດວຽກງານຊາຍແດນແຫ່ງຊາດຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານ.

1.11 ສະຫລຸບລາຍງານວຽກງານຊາຍແດນແຫ່ງຊາດໃຫ້ແກ່ລັດຖະບານເປັນປົກກະຕິ.

1.12 ຍາດແຍ່ງການຊ່ວຍເຫລືອຈາກຕ່າງປະເທດເພື່ອຮັບໃຊ້ໃຫ້ວຽກງານຊາຍແດນແຫ່ງຊາດ.

1.13 ສະເໜີລັດຖະບານຍ້ອງຍໍກົມກອງ ແລະ ບຸກຄົນຢູ່ພາຍໃນ ແລະ ຕ່າງປະເທດທີ່ມີຜົນງານປະກອບສ່ວນຕໍ່ວຽກງານຊາຍແດນແຫ່ງຊາດ.

1.14 ສ້າງຕັ້ງຫ້ອງການຄະນະກໍາມະການຊາຍແດນປະຈໍາຢູ່ກະຊວງການຕ່າງປະເທດເພື່ອປະສານກັບບັນດາຂະແໜງການກ່ຽວຂ້ອງ.

2. <u>ກະຊວງປ້ອງກັນປະເທດ.</u>

2.1 ສ້າງແຜນການຍຸດທະສາດປ້ອງກັນ ແລະປົກປັກຮັກສາຊາຍແດນແຫ່ງຊາດ

2.2 ມີໜ້າທີ່ເຄື່ອນໄຫວເພື່ອຕິດຕາມກໍາແໜ້ນສະພາບຢູ່ບໍລິເວນຊາຍແດນແຫ່ງຊາດເປັນປະຈໍາເພື່ອປົກປັກຮັກສາຄວາມໝັ້ນຄົງ, ອໍານາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນ.

2.3 ມີໜ້າທີ່ປະສານສົມທົບກັບອົງການກ່ຽວຂ້ອງຂອງປະເທດໃກ້ຄຽງເພື່ອກວດກາຮັກສາຄວາມສະຫງົບຮຽບຮ້ອຍ ແລະ ຄຸ້ມຄອງເສັ້ນຊາຍແດນ, ຫລັກໝາຍຊາຍແດນແຫ່ງຊາດ ແລະ ສ້ອມແປງຫລັກໝາຍທີ່ຖືກເປ່ເພເສຍຫາຍ.

2.4 ບັນຊາກໍາລັງປ້ອງກັນຮັກສາຊາຍແດນ.

2.5 ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການສໍາຫລວດວັດແທກ, ຖ່າຍພາບທາງອາກາດ, ສ້າງແຜນທີ່ຊາຍແດນແຫ່ງຊາດ ແລະ ແຜນທີ່ຮັບໃຊ້ໃຫ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

2.6 ປະສານສົມທົບກັບບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນເພື່ອປົກປັກຮັກສາຄວາມສະຫງົບຮຽບຮ້ອຍ ແລະ ຄວາມໝັ້ນຄົງຕາມບໍລິເວນຊາຍແດນແຫ່ງຊາດ.

2.7 ແຕ່ງຕັ້ງພະນັກງານບັນຊາ ແລະ ພະນັກງານວິຊາການເຂົ້າໃນວຽກງານຊາຍແດນແຫ່ງຊາດ.

2.8 ສ້າງຕັ້ງກົງຈັກທີ່ຮັບຜິດຊອບວຽກງານຊາຍແດນສັງກັດຢູ່ໃນກອງບັນຊາການທະຫານແຂວງທີ່ມີຊາຍແດນຕິດກັບປະເທດໃກ້ຄຽງ.

2.9 ຂຶ້ນແຜນການຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ພາຫະນະ ແລະ ອຸປະກອນຮັບໃຊ້ວຽກງານຊາຍແດນພາຍໃຕ້ຂອບເຂດຄວາມຮັບຜິດຊອບຂອງຕົນ.

3. ກະຊວງປ້ອງກັນຄວາມສະຫງົບ.

3.1 ຄຸ້ມຄອງ ແລະ ກວດກາການເຂົ້າ-ອອກເມືອງຂອງພົນລະເມືອງລາວ ແລະ ຊາວຕ່າງປະເທດຢູ່ຕາມດ່ານຊາຍແດນ ແລະ ປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຕາມບໍລິເວນຊາຍແດນ.

3.2 ຄຸ້ມຄອງກວດກາການອອກບັດປະຈຳຕົວຂອງກອງບັນຊາການປ້ອງກັນຄວາມສະຫງົບແຂວງສຳລັບປະຊາຊົນເຂດຊາຍແດນ ແລະ ການອອກບັດຜ່ານແດນຂອງທ້ອງຖິ່ນ.

3.3 ປະສານສົມທົບກັບກະຊວງ, ອົງການປົກຄອງທ້ອງຖິ່ນແກ້ໄຂບັນຫາການລ່ວງລະເມີດເຂດແດນຂອງຊາວຕ່າງປະເທດ ແລະປະຊາຊົນລາວ.

3.4 ປະສານສົມທົບກັບອົງການກ່ຽວຂ້ອງຂອງປະເທດໃກ້ຄຽງກ່ຽວກັບຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຕາມຊາຍແດນ.

3.5 ເປັນເຈົ້າການ ແລະ ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການດຳເນີນມາດຕະການສະກັດກັ້ນ ແລະ ປາບປາມການກໍ່ອາດສະຍາກຳ, ການລັກລອບຂອງເຖື່ອນ, ການລັກລອບຂ້າມຊາຍແດນຕັ້ງພູມລຳເນົາ ແລະ ການທຳການຜະລິດຕາມບໍລິເວນຊາຍແດນ.

3.6 ຂຶ້ນແຜນ ແລະ ຄຸ້ມຄອງການໃຊ້ຈ່າຍງົບປະມານ, ອຸປະກອນ ແລະ ພາຫະນະຮັບໃຊ້ວຽກງານຊາຍແດນພາຍໃຕ້ຄວາມຮັບຜິດຊອບຂອງຕົນ.

4. ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ.

4.1 ໃຫ້ການຮ່ວມມື, ສະໜອງຂໍ້ມູນຂ່າວສານກ່ຽວກັບຊາຍແດນແຫ່ງຊາດ.

4.2 ເປັນເຈົ້າການໃນວຽກງານຕ້ານຕະຝັ່ງເຈື່ອນ ແລະ ຮັກສາລະບົບນິເວດວິທະຍາຕາມແມ່ນ້ຳຊາຍແດນ.

4.3 ຕິດຕາມ ແລະ ຄຸ້ມຄອງທາງ ແລະ ຂົວເຊື່ອມຕໍ່ຊາຍແດນກັບປະເທດໃກ້ຄຽງ.

4.4 ແຕ່ງຕັ້ງພະນັກງານນຳພາ ແລະ ພະນັກງານວິຊາການເຂົ້າໃນວຽກງານຊາຍແດນແຫ່ງຊາດ.

5. ສຳນັກງານນາຍົກລັດຖະມົນຕີ ( ກົມແຜນທີ່ແຫ່ງຊາດ )

5.1 ປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການສຳຫລວດວັດແທກ, ຖ່າຍພາບທາງອາກາດ, ສ້າງ ແລະ ພິມແຜນທີ່ເສັ້ນຊາຍແດນແຫ່ງຊາດ, ຄຸ້ມຄອງຂໍ້ມູນເຄົ້າກ່ຽວກັບການສຳຫລວດວັດແທກ, ຮູບຖ່າຍທາງອາກາດ ແລະແຜນທີ່ເສັ້ນຊາຍແດນແຫ່ງຊາດ.

5.2 ປະສານສົມທົບກັບພາກສ່ວນກ່ຽວຂ້ອງຂອງທ້ອງຖິ່ນສຳຫລວດວັດແທກ, ສ້າງ ແລະ ພິມແຜນທີ່ເຂດຊາຍແດນເຊື່ອມຕໍ່ ( ບ້ານ, ເມືອງ ແລະ ແຂວງ ).

5.3 ສົມທົບກັບບັນດາກະຊວງ, ທ້ອງຖິ່ນທີ່ກ່ຽວຂ້ອງສຶກສາຄົ້ນຄວ້າ, ວິໃຈຂໍ້ມູນ, ເອກະສານຕ່າງໆ ທາງດ້ານເຕັກນິກເພື່ອເປັນພື້ນຖານໃຫ້ແກ່ວຽກງານຊາຍແດນແຫ່ງຊາດ ແລະ ເຂດເຊື່ອມຕໍ່ ( ບ້ານ, ເມືອງ ແລະ ແຂວງ ).

5.4 ແຕ່ງຕັ້ງພະນັກງານນຳພາ, ພະນັກງານວິຊາການເຂົ້າຮ່ວມໃນວຽກງານຊາຍແດນແຫ່ງຊາດ ແລະ ເຂດແດນເຊື່ອມຕໍ່ພາຍໃນປະເທດ.

5.5 ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນກ່ຽວກັບວຽກງານຊາຍແດນແຫ່ງຊາດ.

5.6 ຂຶ້ນແຜນ ແລະ ຄຸ້ມຄອງການໃຊ້ຈ່າຍງົບປະມານ, ພາຫະນະ ແລະ ອຸປະກອນຮັບໃຊ້ວຽກງານ ຊາຍແດນແຫ່ງຊາດພາຍໃຕ້ຂອບເຂດຄວາມຮັບຜິດຊອບຂອງຕົນ.

<u>ມາດຕາ 2.</u> ມອບໃຫ້ກະຊວງ, ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນນຳເອົາເນື້ອໃນດຳລັດສະບັບນີ້ໄປຜັນຂະຫຍາຍໂດຍມີການປະສານສົມທົບກັນເປັນປະຈຳເພື່ອເຮັດໃຫ້ວຽກງານຄຸ້ມຄອງຊາຍແດນແຫ່ງຊາດໄດ້ຮັບຜົນດີ.

<u>ມາດຕາ 3.</u> ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫລວງວຽງຈັນ, ເຂດພິເສດແລະພາກສ່ວນທີ່ກ່ຽວຂ້ອງອື່ນໆຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

<u>ມາດຕາ 4.</u> ດຳລັດສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ບັນຍັດທີ່ລະບຸໄວ້ໃນດຳລັດ, ຂໍ້ຕົກລົງ ຫຼື ລະບຽບການສະບັບອື່ນ ເຊິ່ງຂັດກັບດຳລັດສະບັບນີ້ແມ່ນໃຫ້ຍົກເລີກ.

ນາຍົກລັດຖະມົນຕີ

ບຸນຍັງ ວໍລະຈິດ